**ການບ້ານບົດທີ 6 ພາກຕົ້ນ**

# ບ້ານເກີດເມືອງນອນຄືຕາໂຊ

*ໃນບົດທີ 6 ນີ້ເຮົາຈະທວນຄືນເລື່ອງຊີວິດຂອງໂຊໂລຈົນກວ່າເພິ່ນຍ້າຍອອກຈາກເມືອງຕາໂຊ*

**1** ໃນບົດຮຽນທີ່ຜ່ານມາ ເຮົາຮຽນເລື່ອງດັ່ງຕໍ່ໄປນີ້:

ກ. ຫຼັງຈາກໂຊໂລກັບໃຈໃໝ່ ເພິ່ນຢູ່ໃນເຂດອາລະເບຍ ແລະດາມາເຊຈັກປີກ່ອນລົງໄປເຢລູຊາ ເລັມອີກ? ______________________

ຂ. ເພິ່ນໂຕນໜີຈາກພວກຢິວໃນດາມາເຊຢ່າງໃດ? ______________________

______________________

ຄ. ໄປເຖິງເຢລູຊາເລັມແລ້ວ ພວກຊຶດສະຕຽນຍັງບໍ່ເຊື່ອເພິ່ນຈົນກວ່າໃຜພາໂຊໂລໄປຫາພວກອັກຄະ ສາວົກ? ______________________

ງ. ໂຊໂລພັກຢູ່ບ້ານເປໂຕ (ເກຟາ) ຈັກມື້? ______________________

**2** ໜີຈາກເຢລູຊາເລັມແລ້ວໂຊໂລກັບໄປບ້ານເກີດເມືອງນອນ ຢູ່ບ່ອນນັ້ນ 10 ປີກ່ອນອອກໄປປະກາດ ພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ.

ກ. ໂຊໂລຢູ່ເມືອງໃດ 10 ປີກ່ອນອອກໄປປະກາດພະທຳ? ______________________

ຂ. ແມ່ນໃຜແຕ່ງຕັ້ງໂຊໂລໄວ້ ເປັນຜູ້ປະກາດພະທຳໃຫ້ຄົນຕ່າງຊາດ? ______________________

ຄ. ບອກໄວ້ຕັ້ງແຕ່ວັນໃດ? ______________________




**3** ກ. ລໍຖ້າໃນເມືອງຕາໂຊຫຼາຍປີແລ້ວ ໂຊໂລຈວນຈະເລີ້ມຕົ້ນປະກາດພະທຳໃຫ້ພວກໃດ? (ຕາມຮູບນີ້) ______________________

ຂ. ໂຊໂລລໍຖ້າໃນເມືອງຕາໂຊຈັກປີກ່ອນ?

______________________

**4** ເມືອງຕາໂຊເປັນສູນກາງໃນການຄ້າຂາຍ ມີຫຼາຍຊາດຫຼາຍພາສາມາຊື້ຂາຍ. ດັ່ງນັ້ນ ເປັນໂອກາດ ທີ່ເພິ່ນຈະຄູ້ນເຄີຍກັບຄົນຊາດຕ່າງ ໆ. ແລະຍັງມີມະຫາວິທະຍາໄລທີ່ມີຊື່ສຽງດ້ວຍ. ມີນັກສຶກສາມາ ຮຽນຈາກຫຼາຍປະເທດ. ແມ່ນຄົນໃດທີ່ຢູ່ລໍຖ້າໃນເມືອງຕາໂຊ 10 ປີ ກ່ອນຈະອອກໄປປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ? ______________________

**5** ໃນການສຶກສາເລື່ອງປະຫວັດຊີວິດຂອງໂຊໂລນີ້ ເຮົາຈະແບ່ງເປັນສອງພາກ ຄືພາກທີ່ບ້ານພັກອາໄສ ຢູ່ໃນບ້ານເກີດເມືອງນອນແລ້ວພາກຕໍ່ໄປຫຼັງຈາກເພິ່ນຍ້າຍບ້ານໄປ. ບ້ານຢູ່ອາໄສໃນພາກທຳ ອິດນັ້ນຢູ່ໃສ? ______________________________________________

**6** ໃນບົດຮຽນທີ 7 ຕໍ່ໄປ ເຮົາຈະເລີ່ມຮຽນເລື່ອງພາກທີສອງໃນຊີວິດເພິ່ນທີ່ຍ້າຍໄປຢູ່ເມືອງອັນຕິໂອເຂຍ.

ກ. ໃນພາກຕົ້ນ ເພິ່ນຢູ່ໃສ? __________ ຂ. ໃນພາກທີສອງຢູ່ໃສ? ______________

**7** ກ່ອນຈະເລີ່ມຮຽນກ່ຽວກັບພາກອັນຕີໂອເຂຍ ເຮົາຈະທວນຄືນເລື່ອງເຫດການຕ່າງ ໆ ໃນເມືອງຕາໄຊ.




**8** ໃຫ້ທ່ານໝາຍເຫດການຕໍ່ໄປນີ້ທີ່ເກີດຂຶ້ນໃນເມືອງຕາໄຊ. (ເລືອກ)

ກ. ໂຊໂລເກີດ
ຂ. ຖືກພິທີຕັດ
ຄ. ຮຽນໃນໂຮງທຳມະເທດສະໜາ
ງ. ຮຽນພະທຳກັບຄາມາລີເອັນ
ຈ. ຢູ່ເມື່ອພະເຢຊູຕາຍແລະຄືນຈາກຕາຍ
ສ. ເຫັນເຂົາຂ້າຊະເຕຟາໂນ
ຊ. ພົບພະເຢຊູ
ຍ. ຢູ່ກັບເປໂຕ 15 ວັນ
ດ. ລໍຖ້າ 10 ປີ

**9** ໃນພາກທຳອິດ (ຕາໄຊ) ໂຊໂລເດີນທາງໄປເຢລູຊາເລັມຈັກເທື່ອ? ________________

**10** ໃນສາມເທື່ອທີ່ໂຊໂລໄປເຢລູຊາເລັມນັ້ນ

ກ. ແມ່ນເທື່ອໃດທີ່ໄປຮຽນກັບຄາມາລິເອັນ? ______________________________

ຂ. ເທື່ອໃດທີ່ຢູ່ຮ່ວມກັບຄົນທີ່ຂ້າຊະເຕຟາໂນ? ______________________________

ຄ. ເທື່ອໃດທີ່ພັກກັບ ເປໂຕ 15 ວັນ? ______________________________

**11** ລະຫວ່າງທີ່ໄປກຸງເຢລູຊາເລັມ

ກ. ໂຊໂລຕັ້ງໃຈຈະໄປໃສ? ______________________________

ຂ. ໄປເພື່ອຫຍັງ? ______________________________

ຄ. ໂຊໂລພົບໃຜຕາມທາງ? ______________________________

ງ. ເພິ່ນໄປຫາບ່ອນສະຫງົບງຽບໃນເຂດໃດ? ______________________________

ຈ. ຢູ່ໃນເຂດນັ້ນຈັກປີ? ______________________________

**12** ຕໍ່ໄປນີ້ໃຫ້ຂຽນບ່ອນ ຕາມແຕ່ລະເຫດການ. (ດາມາເຊ ຫຼືອາລະເບຍ)

ກ. ໂຊໂລພົບພະເຢຊູໃກ້ເມືອງໃດ? ______________________________

ຂ. ອານາເນຍມາຫາໃນເມືອງໃດ? ______________________________

ຄ. ຮັບສິນບັບຕິສະມາຢູ່ໃສ? ______________________________

ງ. ໄປສະແຫວງຫາພະເຈົ້າໃນບ່ອນສະຫງົບງຽບຢູ່ໃສ? ______________________________

ຈ. ລູກສິດເອົາໂຊໂລລົງຕາມປ່ອງກຳແພງຢູ່ໃສ? ______________________________

**13** ຫຼັງຈາກຢູ່ໃນເຂດດາມາເຊແລະອາລະເບຍ ໂຊໂລໄປກຸງເຢລູຊາເລັມເປັນເທື່ອທີສາມ.

ກ. ເພິ່ນໄປພັກບ້ານຂອງໃຜ? __________ ຂ. ພັກຈັກວັນ? ______________________

**14** ໃນ 3 ເທື່ອທີ່ໂຊໂລໄປເຢລູຊາເລັມ

ກ. ເທື່ອໃດທີ່ຢູ່ກັບເປໂຕ (ເກຟາ) 15 ວັນ? ______________________________

ຂ. ເທື່ອໃດທີ່ຢູ່ຮ່ວມກັບຄົນທີ່ຂ້າຊະເຕຟາໂນ? ______________________________

ຄ. ເທື່ອໃດທີ່ໄປຮຽນກັບຄາມາລິເອັນ? ______________________________

**15** ທວນຄືນເລື່ອງພາກທຳອິດຂອງໂຊໂລ.

ກ. ໂຊໂລເກີດໃນເມືອງໃດ? ______________________________

ຂ. ຫຼັງຈາກເກີດ 8 ວັນຖືກພິທີໃດ? ______________________________

ຄ. ພໍ່ແມ່ໃສ່ຊື່ຫຍັງ? ______________________________

ງ. ເລີ້ມຕົ້ນຮຽນບ່ອນໃດ? ______________________________

ຈ. ຕໍ່ໄປເພິ່ນເຂົ້າໄປຢູ່ໃນປະເທດຂອງຊາດຢິວຄືປະເທດໃດ? ____________________

ສ. ໄປສຶກສາຊັ້ນສູງໃນກຸງໃດ? ______________________________

ຊ. ສຶກສາໃນໂຮງຮຽນໃດ? ______________________________

ຍ. ຮຽນແລ້ວເບິ່ງຄືວ່າກັບໄປບ້ານເກີດເມືອງນອນຄືເມືອງໃດ? ____________________

ດ. ໃນຄາວນັ້ນ ແມ່ນໃຜທີ່ຕາຍແລ້ວຄືນອີກໃນກຸງເຢລູຊາເລັມ? ____________________

ຕ. ຫຼັງຈາກເຫດການເຫຼົ່ານັ້ນ ໂຊໂລກັບໄປກຸງໃດເປັນເທື່ອທີສອງ? __________________

ຖ. ໃນກຸງນັ້ນໂຊໂລເລີ້ມຕົ້ນຂົ່ມເຫັງພວກໃດ? ________________________________

ທ. ເພິ່ນເຂົ້າຮ່ວມກັບຄົນທີ່ຄວ່າງຫີນຂ້າໃຜ? _________________________________

ນ. ບໍ່ເຫິງເພິ່ນເດີນທາງໄປຂັງຄຸກສະຕຽນໄວ້ໃນເມືອງໃດ? _______________________

ບ. ຈວນຈະເຖິງແລ້ວ ເພິ່ນພະເຊີນໜ້າກັບໃຜ? ________________________________

ປ. ມີຄົນພາໂຊໂລເຂົ້າໄປໃນເມືອງໃດ? _____________________________________

ຜ. ແມ່ນໃຜວາງມືໃສ່ເພື່ອໃຫ້ໂຊໂລເຫັນຮຸ່ງອີກ? _______________________________

ຝ. ໂຊໂລຮັບສິນໃດ? _________________________________________________

ພ. ໂຊໂລອອກໄປສະແຫວງຫາພະເຈົ້າໃນບ່ອນສະຫງົບງຽບປະເທດໃດ? _____________

ຟ. ເພິ່ນຢູ່ໃນເຂດດາມາເຊແລະອາລະເບຍຈັກປີ? ______________________________

ມ. ໂຊໂລໜີຈາກຄົນຢິວໃນດາມາເຊຢ່າງໃດ? ________________________________

ຢ. ເພິ່ນກັບໄປກຸງໃດເປັນເທື່ອທີສາມ? _____________________________________

ລ. ຢູ່ຈັກວັນ? ______________________________________________________

ວ. ຢູ່ກັບໃຜ? ______________________________________________________

ຫ. ກັບໄປຕາໂຊ ຢູ່ຈັກປີກ່ອນຈະອອກໄປປະກາດພະທຳໃຫ້ຄົນຕ່າງຊາດ? ____________

**16** ເຫດການຕໍ່ໄປນີ້ເກີດຂຶ້ນຢູ່ໃສ? ໃຫ້ຕອບ "ດາມາເຊ" "ເຢລູຊາເລັມ" "ຕາໂຊ" ຫຼື "ອາລະເບຍ" ຕາມທີ່ຖືກຕ້ອງ.

ກ. ໂຊໂລເກີດ ____________

ຂ. ຖືກພິທີຕັດ ____________

ຄ. ເລີ້ມຮຽນໃນໂຮງທຳມະເທດສະໜາ ____________

ງ. ຮຽນໃນໂຮງຮຽນຂອງຄາມາລີເອັນ ____________

ຈ. ທີ່ຢູ່ເມື່ອພະເຢຊູຕາຍແລ້ວຄືນຈາກຕາຍ. ____________

ສ. ຢູ່ຮ່ວມກັບຄົນທີ່ຂ້າຊະເຕຟາໂນ ____________

ຊ. ພະເຊີນໜ້າກັບພະເຢຊູ ____________

ຍ. ອານາເນຍວາງມືໃຫ້ເພິ່ນເຫັນຮຸ່ງອີກ ____________

ດ. ຮັບບັບຕິສະມາ ____________

ຕ. ສະແຫວງຫາພະເຈົ້າໃນບ່ອນສະຫງົບງຽບ ____________

ຖ. ໜີຈາກພວກຢິວໂດຍຢ່ອນລົງຕາມປ່ອງກຳແພງ ____________

ທ. ພັກຢູ່ກັບ ເປໂຕ 15 ວັນ ____________

ນ. ລໍຖ້າ 10 ປີກ່ອນຈະປະກາດພະທຳ ____________

**17** ກ. ໃນພາກທຳອິດ ໂຊໂລຖືວ່າບ້ານຢູ່ອາໄສຢູ່ໃສ? ____________________________

ຂ. ໃນພາກທຳອິດນັ້ນ ໂຊໂລເດີນທາງໄປ ເຢລູຊາເລັມຈັກເທື່ອ? ___________________

ຄ. ໄປຈັກເທື່ອຫຼັງຈາກກັບໃຈໃໝ່? ________________________________________

ງ. ເທື່ອນັ້ນໄປຢູ່ຈັກມື້? ________________________________________________

**18** ກ. ໃນສາມເທື່ອທີ່ໂຊໂລໄປເຢລູຊາເລັມ ແມ່ນເທື່ອໃດທີ່ເພິ່ນຮ່ວມມືກັບຄົນຂ້າຊະເຕຟາໂນ?

ຂ. ເທື່ອໃດທີ່ພັກກັບເປໂຕ 15 ວັນ? ________________________________________

ຄ. ເທື່ອໃດທີ່ໄປຮຽນຈາກ ຄາມາລີເອັນ? _____________________________________

**19** ລະຫວ່າງເວລາທີ່ໂຊໂລກັບໃຈໃໝ່ຕາມທາງໄປດາມາເຊ ເຖິງເວລາທີ່ເລີ້ມປະກາດພະທຳໃນ ເມືອງອັນຕີໂອເຂຍ ຜ່ານມາຫຼາຍປີທີ່ເພິ່ນຕຽມຈິດໃຈໄວ້. ໃນຄາວນັ້ນເພິ່ນຮຽນຮູ້ຈາກພະຄຳພີ ເດີມ ວ່າ ຄວາມລອດບໍ່ໄດ້ມາໂດຍຖືພະບັນຍັດ ແຕ່ໂດຍຄວາມເຊື່ອ.

ກ. ໂຊໂລຢູ່ໃນດາມາເຊ ແລະອາລະເບຍຈັກປີ? _______________________________

ຂ. ລໍຖ້າໃນເມືອງຕາໂຊຈັກປີ? _____________________________________________

ຄ. ຮວມຈັກປີ? _______________________________________________________

**20** ໃນ ຄາລາເຕຍ 1:11-12 ເພິ່ນເນັ້ນວ່າຂ່າວປະເສີດທີ່ເພິ່ນປະກາດນັ້ນ ບໍ່ແມ່ນມາຈາກມະນຸດ ແຕ່ມາຈາກພະເຢຊູ.

ກ. ເພິ່ນຢູ່ໃນບ່ອນສະຫງົບ ແລະລໍຖ້າຈັກປີກ່ອນຈະອອກໄປປະກາດພະທຳ? __________

ຂ. ເພິ່ນຢູ່ກັບສາວົກຄົນອື່ນຄືເປໂຕຈັກວັນ? ___________________________________

**21** ຫຼັກຄວາມເຊື່ອທີ່ເພິ່ນສອນນັ້ນ ມາທາງໃດ? (ເລືອກ)

ກ. ມາທາງສາວົກຄົນອື່ນ

ຂ. ພະເຢຊູສະແດງໃຫ້ຮູ້ໂດຍກົງ

**22** ໃນ ຄລຕ 1:15-21 ເພິ່ນອະທິບາຍຢ່າງແຈ້ມແຈ້ງເລື່ອງການຮັບຮູ້ເລື່ອງຂ່າວປະເສີດ.

ກ. ຂໍ້ໃດ(ໃນຄາລາເຕຍ 1:15-21) ບອກວ່າເພິ່ນບໍ່ໄດ້ປຶກສາກັບມະນຸດຄົນໃດ? _________

ຂ. ຂໍ້ໃດບອກວ່າເພິ່ນບໍ່ໄດ້ຂຶ້ນເມືອຫາພວກທີ່ເປັນອັກຄະສາວົກກ່ອນໃນກຸງເຢລູຊາເລັມ? _

ຄ. ທີ່ເພິ່ນອອກໄປຍັງປະເທດອາລະເບຍທັນທີ ເຫັນໃນຂໍ້ໃດ? ____________________

ງ. ຜ່ານໄປ 3 ປີ ກ່ອນຈະໄປຫາສາວົກຄົນອື່ນໃນຂໍ້ໃດ? _________________________

ຈ. ຫຼັງຈາກນັ້ນໄປຢູ່ກັບເປໂຕ (ເກຟາ) ພຽງ 15 ວັນ ໃນຂໍ້ໃດ? ____________________

ສ. ເພິ່ນສາບານວ່າ ບໍ່ຕົວະໃນຂໍ້ໃດ? _______________________________________

ຊ. ຫຼັງຈາກເພິ່ນໄປໃນເຂດຊີເລຍແລະກີລີເກຍ (ຕາໂຊ) ໃນຂໍ້ໃດ? _________________

**23** ໃນ ຄລຕ 1:11-12 ເພິ່ນອະທິບາຍເຫດທີ່ຊຽນຢ່າງລາຍລະອຽດເລື່ອງນີ້. ໃນ 4 ຂໍ້ຕໍ່ໄປນີ້ໃຫ້ທ່ານໝາຍໄວ້ຂໍ້ໃດທີ່ຖືກ.

ກ._____ ໂຊໂລຮຽນຈາກອັກຄະສາວົກຄົນອື່ນປະມານ 3 ປີ

ຂ._____ ບໍ່ໄດ້ຮຽນເລື່ອງຂ່າວປະເສີດຈາກສາວົກຄົນອື່ນ ເພາະເພິ່ນຢູ່ກັບເຂົາພຽງ 15 ວັນ — ບໍ່ມີເວລາພຽງພໍທີ່ຈະສອນ

ຄ._____ ໂຊໂລບໍ່ໄດ້ຮັບຄຳສອນເລື່ອງຂ່າວປະເສີດຈາກພະເຢຊູ ເພາະພະເຢຊູຕາຍແລ້ວບໍ່ຢູ່ນຳຕໍ່ໄປ.

ງ. _____ ໂຊໂລກໍຮັບຮູ້ເລື່ອງຂ່າວປະເສີດຈາກພະເຢຊູ. ສາວົກຄົນອື່ນ ໆ ນັ້ນຢູ່ກັບພະອົງ ຟັງຄຳສອນຂອງພະອົງໃນເມື່ອພະອົງຍັງບໍ່ທັນໄດ້ຂຶ້ນສະຫວັນ. ແຕ່ພະອົງສະແດງໃຫ້ໂຊໂລ ຮູ້ເລື່ອງຂ່າວປະເສີດໃນເມື່ອເພິ່ນສະແຫວງຫາພະອົງຢູ່ອາລະເບຍແລະໃນເມື່ອລໍຖ້າ ຢູ່ເມືອງຕາໂຊໂດຍການອ່ານພະຄຳພີເດີມ.

ຄຳຕອບ:

**1** *ກ. 3 ປີ ຂ. ພວກລູກສິດໃສ່ກວຍປ່ອນລົງຕາມປ່ອງກຳແພງ ຄ. ບາລະນາບາ ງ. 15*

**2** *ກ. ຕາໂຊ ຂ. ພະເຢຊູ ຄ. ຕັ້ງແຕ່ວັນທີ່ໂຊໂລກັບໃຈໃໝ່*

**3** *ກ. ຄົນຕ່າງຊາດ ຂ. 10 ປີ*

**4** *ໂຊໂລ*

**5** *ຕາໂຊ*

**6** *ກ. ຕາໂຊ ຂ. ອັນຕີໂອເຂຍ*

**7** *(ບໍ່ມີຕອບ)*

**8** *ກ ຂ ຄ ຈ ດ ຖືກ*

**9** *3 ເທື່ອ*

**10** *ກ. ທີ 1 ຂ. ທີ 2 ຄ. ທີ 3*

**11** *ກ. ດາມາເຊ ຂ. ຈັບແລະຂັງຄຸ໊ດສະຕຽນໄວ້ໃນຄຸກ ຄ. ພະເຢຊູ ງ. ອາລະເບຍ ຈ. 3 ປີ*

**12** *ກ. ດາມາເຊ ຂ. ດາມາເຊ ຄ. ດາມາເຊ ງ. ອາລະເບຍ ຈ. ດາມາເຊ*

**13** *ກ. ເປໂຕ (ເກຟາ) ຂ. 15 ວັນ*

**14** *ກ. ທີ 3 ຂ. ທີ 2 ຄ. ທີ 1*

ຄໍາຕອບ (ຕໍ່):

**15** *ກ. ຕາໂຊ ຂ. ພິທີຕັດ ຄ. ໂຊໂລ ງ. ໂຮງທໍາມະເທສະໜາໃນເມືອງຕາໂຊ*
*ຈ. ປາແລັດສະຕິນ ສ. ເຢລູຊາເລັມ ຊ. ຂອງຄາມາລິເອັນ ຍ. ຕາໂຊ*
*ດ. ພະເຢຊູ ຕ. ເຢລູຊາເລັມ ຖ. ຊຶດສະຕຽນ ທ. ຊະເຕຟາໂນ ນ. ດາມາເຊ*
*ບ. ພະເຢຊູ ປ. ດາມາເຊ ຜ. ອານາເນຍ ຝ. ບັບຕິສະມາ*
*ພ. ອາລະເບຍ ຟ. 3 ປີ ມ. ພວກລູກສິດຢ່ອນລົງຕາມປ່ອງກໍາແພງ*
*ຢ. ເຢລູຊາເລັມ ລ. 15 ວັນ ວ. ເປໂຕ (ເກຟາ) ຫ. 10 ປີ*

**16** *ກ. ຕາໂຊ ຂ. ຕາໂຊ ຄ. ຕາໂຊ ງ. ເຢລູຊາເລັມ ຈ. ຕາໂຊ ສ. ເຢລູຊາເລັມ*
*ຊ. ດາມາເຊ ຍ. ດາມາເຊ ດ. ດາມາເຊ ຕ. ອາລະເບຍ ຖ. ດາມາເຊ*
*ທ. ເຢລູຊາເລັມ ນ. ຕາໂຊ*

**17** *ກ. ຕາໂຊ ຂ. 3 ຄ. ເທື່ອດຽວ ງ. 15*

**18** *ກ. ເທື່ອທີສອງ ຂ. ເທື່ອທີສາມ ຄ. ເທື່ອທີໜຶ່ງ*

**19** *ກ. 3 ປີ ຂ. 10 ປີ ຄ. 13 ປີ*

**20** *ກ. 13 ປີ ຂ. 15 ວັນ*

**21** *ຂ ຖືກ*

**22** *ກ. ຂໍ້ 16 ຂ. ຂໍ້ 17 ຄ. ຂໍ້ 17 ງ. ຂໍ້ 18 ຈ. ຂໍ້ 18 ສ. ຂໍ້ 20 ຊ. ຂໍ້ 21*

**23** *ຂ ງ ຖືກ.*

## ການບ້ານບົດທີ 6 ພາກປາຍ

# ຄືບກຳນົດ

*ໂຊໂລຄືນດີກັບພະເຈົ້າແລ້ວ ໄດ້ລອດຈາກຄວາມປ້ອຍດ່າຂອງພະບັນຍັດທັງເປັນຜູ້ຈະຮັບມໍລະດົກຈາກພະເຈົ້າ. ຜົນສຸດທ້າຍເພິ່ນພ້ອມທີ່ຈະຮັບພາລະການປະກາດພະທຳໃຫ້ຄົນທີ່ບໍ່ເປັນ ຊາດຢິວຕາມທີ່ພະເຈົ້າຈັດໄວ້ໃຫ້.*

*ໃນບົດຮຽນນີ້ ເຮົາຈະຮຽນຮູ້ວ່າ ພະເຈົ້າຈັດໂຊໂລໄວ້ໃຫ້ຖືກຕາມເວລາ ເໝາະສົມ ເພື່ອປະກາດພະທຳໃຫ້ຄົນຕ່າງຊາດຟັງຕາມທີ່ພະເຈົ້າສັນຍາ ໄວ້ໃຫ້ອັບລາຮາມ. ມີຄວາມສະດວກສາມປະການຄື:*

- *ສັນຕິພາບຂອງຈັກກະພັດໂລມ*
- *ພາສາກຼີກ*
- *ໂຮງທຳມະເທສະໜາຢິວ*

**1** ໃນບົດຮຽນໜ້າຈະເຫັນວ່າໂຊໂລຍ້າຍບ້ານຈາກຕາໂຊໄປຢູ່ອັນຕີໂອເຂຍ ແລ້ວໃນບ່ອນນັ້ນເພິ່ນເລີ່ມຕົ້ນປະກາດພະທຳໃຫ້ຄົນຕ່າງຊາດ. ໃນຄາວດຽວກັນນັ້ນຈະບັງເກີດການອຶດຢາກ. ແມ່ນໃຜ ເປັນເຈົ້າຈັກກະພັດໂລມໃນເວລາດຽວນັ້ນ? (ອ່ານ ກຈກ 11:28) ___________

**2** ໃນຄາວນັ້ນ ມີຫຼາຍປະເທດທີ່ຢູ່ໃຕ້ການປົກຄອງຂອງຈັກກະພັດໂລມ. ທີ່ເຈົ້າຈັກກະພັດປົກຄອງຄືຈັກ ກະພັດໃດ? ___________________________________________

**3** ເຈົ້າຈັກກະພັດກະລາວດີໂອ ປົກຄອງຈາກເມືອງຫຼວງຂອງຈັກກະພັດ ຄືກຸງໃດ? ________



**4** ໃນແຜນທີ່ ເຫັນ 5 ບ່ອນທີ່ສຳຄັນໃນສະໄໝຂອງໂຊໂລ. ທຸກບອ່ນນັ້ນຢູ່ໃນຂອບເຂດຈັກກະພັດໂລມ

ກ. ໃນ 5 ບ່ອນນັ້ນ ແມ່ນບ່ອນໃດທີ່ໂຊໂລລໍຖ້າ 10 ປີ ກ່ອນຈະອອກໄປປະກາດພະທຳໃຫ້ຄົນຕ່າງ ຊາດຟັງ? ______

ຂ. ບ່ອນໃດທີ່ໂຊໂລຍ້າຍໄປໃນເມື່ອຈວນຈະເລີ້ມຕົ້ນ ອອກໄປປະກາດພະທຳໃຫ້ຄົນທີ່ບໍ່ເປັນຊາດຢິວ ຟັງ? ______

ຄ. ບ່ອນໃດທີ່ໂຊໂລໄປສຶກສາພະທຳກັບຄາມາລີເອັນ? ______

ງ. ທີ່ຢູ່ຂອງເຈົ້າຈັກກະພັດກະລາວດີໂອ? ______

ຈ. ທະເລໃຫຍ່ທີ່ຢູ່ຫວ່າງກາງຈັກກະພັດໂລມ? ______

**5** ກ. ຂອບເຂດຈັກກະພັດໂລມນັ້ນໃຫຍ່ຫຼາຍ ລະຍະທາງລະຫວ່າງກຸງໂລມແລະເຢລູຊາເລັມ ຄື 2500 ຫຼັກ. ຖ້າຈະໄປທາງເຮືອຕ້ອງຂ້າມທະເລໃດ? ______

ຂ. ເຈົ້າຈັກກະພັດປົກຄອງຈາກກຸງໃດ? ______

**6** ຈັກກະພັດໂລມແບ່ງເປັນແຂວງ ແລ້ວແຕ່ລະແຂວງມີຜູ້ປົກຄອງ.
(ປົນຊີໂອປີລາດ ເປັນຜູ້ຄຸ້ມຄອງ ແຂວງຢູດາເມື່ອພະເຢຊູຕາຍ.)

ກ. ຕາມທີ່ທ່ານຮຽນມາກ່ອນ ເມືອງຕາໂຊຢູ່ໃນແຂວງໃດ? (ເລືອກ)

______ ຄາລາເຕຍ

______ ກີລີເກຍ

______ ອາເຊຍ

ຂ. ແມ່ນໃນແຂວງໃດທີ່ໂຊໂລໄປປະກາດພະທຳໃຫ້ຄົນຕ່າງຊາດກ່ອນ? ______

ຄ. ທະເລໃຫຍ່ຫວ່າງກາງຈັກກະພັດໂລມຄືທະເລໃດ? ______

**7** ເພື່ອປົກຄອງຈັກກະພັດຢ່າງຮຽບຮ້ອຍເຈົ້າຈັກກະພັດມີກອງທັບທະຫານໃຫຍ່ໃນທຸກແຂວງ. ດັ່ງນັ້ນ ເມື່ອໂຊໂລໄປ ໆ ມາ ໆ ປະກາດພະທຳຕາມທາງບົກຫຼື ທາງນ້ຳກໍດີ ມີການຮັກສາຄວາມສະຫງົບສຸກ ໃນທຸກບ່ອນທີ່ເພິ່ນຈະໄປ. ການເດີນທາງນັ້ນປອດໄພດີຍ້ອນການປົກຄອງຂອງຈັກກະພັດໃດ? ______

**8** ພວກຄົນໂລມນັ້ນມັກສ້າງຫຼາຍຢ່າງ. ໃຫ້ເບິ່ງຮູບຕໍ່ໄປນີ້:






ກ. ເຂົາສ້າງຫຍັງເພື່ອການຂົນສິ່ງສະດວກ? (ເລືອກ)

______ ລົດໄຟ

______ ຖະໜົນປູດ້ວຍຫີນ

______ ລົດເມ

______ ເຮືອ

ຂ. ແມ່ນໃຜຮັກສາຄວາມປອດໄພຈາກນັກປຸ້ນ ທາງບົກແລະທາງທະເລ? ______________

ຄ. ແມ່ນໃຜສວຍໂອກາດເດີນທາງໄປປະກາດພະທຳໃຫ້ຄົນຕ່າງຊາດ? ______________

**9** ແມ່ນສິ່ງໃດທີ່ເປີດໂອກາດໃຫ້ໂຊໂລໄປປ່າວປະກາດຫຼາຍບ່ອນ? (ເລືອກ ຂໍ້ດຽວ)

ກ. ລົດສ່ວນຕົວ

ຂ. ເງິນເປັນຄ່າເດີນທາງ ຈາກພວກຟາລິຊາຍ

ຄ. ສັນຕິພາບຈັກກະພັດໂລມ

ງ. ຍາມສ່ວນຕົວ

## ພາສາກຼີກ

**10** ການຂົນສິ່ງລະຫວ່າງແຕ່ລະແຂວງໃນຈັກກະພັດໂລມສະດວກດີຍ້ອນຖະໜົນ ເຮືອແລະ ການປົກຄອງຂອງໂລມທົ່ວໄປ. ຍິ່ງກວ່ານັ້ນຍັງມີພາສາກາງອີກດ້ວຍ ພາສານັ້ນຄືພາສາໃດ? (ເລືອກ)

______ ພາສາຝຣັ່ງ ______ ພາສາກຼີກ ______ ພາສາລາວ

**11** ໃນເມື່ອໂຊໂລຈະອອກໄປປະກາດພະທຳໃຫ້ຊາດຕ່າງ ໆ ແຕ່ລະຊາດນັ້ນ ມີພາສາຂອງເຂົາເອງ. ຖ້າໂຊໂລຈະຕ້ອງຮຽນທຸກພາສາເຫຼົ່ານັ້ນຈະເປັນການຍາກແທ້ ແຕ່ບໍ່ຕ້ອງ ເພາະເຂົາທຸກຄົນຮຽນ ພາສາກາງເພື່ອການຄົມມະນາຄົມ ໃນການຄ້າຂາຍ ການປົກຄອງ ໆ ລ ໆ. ພາສາກາງນັ້ນ ຄືພາສາໃດ? ______________________________________________

**12** ຂ້າງຂວານີ້ ເຫັນຕົວຢ່າງຄື ຄາລາເຕຍ 1:1 ຕົວອັກສອນ ໃນ ພາສານັ້ນແຈ້ງດີ ແລະອ່ານ ໄດ້ ງ່າຍ. ພາສາທີ່ຂຽນໄວ້ຂ້າງຂວາ ເປັນ ພາສາໃດ? __________




ໂຮງ

*ຂໍ້ສະດວກທີ 3 ນັ້ນຄື ໂຮງທຳມະເທດສະໜາຂອງສາດສະໜາຢິວ.*
*ເກືອບທຸກໆ ເມືອງໃຫຍ່ໃນຈັກກະພັດໂລມມີຄົນຢິວບາງຄົນ ແລ້ວບ່ອນ ໃດທີ່ມີຄົນຢິວຢ່າງນັ້ນ ເຂົາຈະສ້າງບ່ອນເພື່ອມາຮຽນພະຄຳພີເດີມຮ່ວມກັນ.*

**13** ກ. ບ່ອນທີ່ຄົນຢິວສ້າງໄວ້ເພື່ອສຶກສາພະຄຳພີເດີມເອີ້ນວ່າຫຍັງ? __________________
ຂ. ເມື່ອຍັງເປັນເດັກ ໂຊໂລໄປສຶກສາພະຄຳພີເດີມໃນໂຮງທຳເມືອງໃດ? ____________
ຄ. ເມືອງນັ້ນຢູ່ໃນແຂວງໃດ? ________________________________________

**14** ໃນຮູບນີ້ເຫັນ ໂຊໂລອອກໄປປະກາດພະທຳເປັນຖ້ຽວທຳອິດ.

<u>ແຂວງ ຄາລາເຕຍ</u>



ໂຮງທຳມະເທດສະໜາ ຄາລາເຕຍ

ກ. ເພິ່ນໄປເມືອງໃດກ່ອນ? ________________

ຂ. ເຂົ້າເມືອງແລ້ວ ໄປບ່ອນໃດ? ______________

**15** ຕາມປົກກະຕິ ເມື່ອໂຊໂລເຂົ້າໄປໃນເມືອງໃດ ເພິ່ນຈະໄປໂຮງທຳມະເທດສະໜາກ່ອນ. ໃນ ໂຮງທຳນັ້ນເຂົາສອນພະຄຳພີພາກໃດ? ___________________________________

**16** ໃຫ້ອ່ານ ໂລມ 1:16
ກ. ແມ່ນພວກໃດຮັບຂ່າວປະເສີດກ່ອນ? _________________________________
ຂ. ດັ່ງນັ້ນ ຖ້າໂຊໂລໄປບ່ອນໃໝ່ ເພິ່ນໄປບ່ອນໃດກ່ອນ? _______________________

**17** ເປັນຫຍັງເພິ່ນໄປເຂົ້າໂຮງທໍາມະເທສະໜາກ່ອນ? (ໝາຍເອົາຂໍ້ໃດທີ່ຖືກ)

ກ. ເພາະເພິ່ນຈະປະກາດພະທໍາໃຫ້ແຕ່ຊາດຢິວຊາດດຽວ

ຂ. ຄົນຢິວມັກອ່ານພະທໍາ

ຄ. ຄົນຢິວຫຼາຍຄົນທີ່ຊອກຫາພະເຈົ້າໂດຍຈິງໃຈ ລໍຖ້າພະຜູ້ຊ່ວຍຈະມາ.

ງ. ເຂົາເຊື່ອໃນພະເຈົ້າອົງດຽວ ແລ້ວບໍ່ມີສ່ວນກ່ຽວກັບພະຫຼາຍທີ່ຄົນໂລມ ຄົນຕ່າງຊາດນັບຖື.

ຈ. ເພິ່ນບໍ່ຢາກເຫັນໜ້າຕາຂອງຄົນຕ່າງຊາດ

ສ. ຄົນຢິວທີ່ຮັບເຊື່ອໃນພະເຢຊູ ມີພື້ນຖານຈາກພະຄໍາພີເດີມຈຶ່ງຈະເຂົ້າໃຈຂ່າວປະເສີດດີ.

**18** ໃນລາຍຊື່ຕໍ່ໄປນີ້ ມີປະການໃດທີ່ເປັນຂໍ້ສະດວກໃຫ້ແກ່ໂຊໂລປະກາດພະທໍາໄປເຖິງທຸກຄົນທີ່ຢູ່ໃນເຂດ ຈັກກະພັດໂລມ? (ເລືອກ)

ກ. ວິທະຍຸ

ຂ. ພາສາກຼີກທີ່ໃຊ້ທົ່ວໄປ

ຄ. ສະໝຸດປົກແຂງ

ງ. ໂຮງທໍາມະເທສະໜາ

ຈ. ການປົກຄອງຈັກກະພັດໂລມ

ສ. ລົດໄຟ

**19** ມີຂໍ້ສະດວກ 3 ປະການໃດທີ່ເປັນຜົນປະໂຫຍດໃນການປ່າວປະກາດໃນເວລານັ້ນ? (ຕື່ມຄວາມທີ່ຂາດ)

ກ. ພາສາ ______________________________________________

ຂ. ໂຮງທໍາ ______________________________________________

ຄ. ການປົກຄອງຂອງ ________________________________________

**20** ແຜນທີ່ຈັກກະພັດໂລມ.




ໃຫ້ທ່ານຈົດສະຖານທີ່ສຳຄັນທີ່ທ່ານຮຽນມາໃນບົດຮຽນນີ້ ໃຫ້ຖືກກັບຕົວອັກສອນໃນແຜ່ນທີ່.

ກ. ____________________

ຂ. ____________________

ຄ. ____________________

ງ. ____________________

ຈ. ____________________

## ຮຽນຄືນ

*ພະເຈົ້າຈັດໃຫ້ໂຊໂລເກີດໃນເວລາເໝາະສົມ ສຳລັບການປະກາດພະທຳໃຫ້ທຸກຊາດ. ມີຂໍ້ສະດວກໃຫ້ປ່າວປະກາດ 3 ປະການ:*

**21** ຂໍ້ສະດວກທີ ໜຶ່ງ (ຕື່ມຄວາມທີ່ຂາດ) ລະຫວ່າງແຕ່ລະເມືອງສຳຄັນມີ (ກ) _________ ປູດ້ວຍຫີນ. ແລະອີກມີທະເລ (ຂ) ____________________ ທີ່ໄປໆ ມາໆ ດ້ວຍ (ຄ) _________ . ຍິ່ງກວ່ານັ້ນອີກ ມີ (ງ) ___________ ຂອງ ຈັກກະພັດໂລມທີ່ຍາມຮັກສາຄວາມສະຫງົບສຸກ.

**22** ຂໍ້ສະດວກທີສອງ (ຕື່ມຄວາມທີ່ຂາດ)

ທຸກຊາດຢູ່ໃຕ້ການບັງຄັບຂອງຈັກກະພັດໂລມ ແລ້ວເຖິງວ່າແຕ່ລະຊາດມີພາສາຂອງໃຜຂອງລາວ ທຸກຊາດເຫຼົ່ານັ້ນກໍຮູ້ປາກພາສາກາງຄືພາສາ (ກ) _________ . ດັ່ງນັ້ນ ໂຊໂລສາມາດປາກກັບ ທຸກຄຶດສະຕະຈັກທີ່ຕັ້ງໄວ້ ເປັນພາສາກຼີກ ແລ້ວສາມາດຂຽນຈົດໝາຍໄປເຖິງຄຶດສະຕະຈັກທຸກ (ຂ) _________ ນັ້ນໄດ້.

**23** ຂໍ້ສະດວກທີສາມ (ຕື່ມຄວາມທີ່ຂາດ) ໃນທຸກເມືອງໃຫຍ່ຂອງຈັກກະພັດໂລມທີ່ມີຄົນຢິວ ເຂົາເຄີຍຮ່ວມກັນ ທຸກອາທິດໃນ (ກ) _________ ເທດສະໜາ ເພື່ອສຶກສາ (ຂ) _________ ເດີມ. ໃນພະຄຳພີເດີມນັ້ນ ເຂົາອ່ານເລື່ອງພະຜູ້ (ຄ) ________ ທີ່ຈະມາ. ແລະໂຊໂລ (ໂປໂລ) ໄປເທດສະໜາໃນໂຮງທຳສາສະໜາຢິວໃນ ແຂວງ _____________ ນັ້ນກ່ອນ.

**24** ມີຂໍ້ສະດວກສາມປະການໃດທີ່ຊ່ວຍຊູການປະກາດໃນສະໄໝນັ້ນ?

______________________________________________________________________

______________________________________________________________________

______________________________________________________________________

*ຈົ່ງພິຈາລະນາ*

*ໃຫ້ອ່ານ ຄາລາເຕຍ 4:4 ທີ່ວ່າ:*

*"ແຕ່ເມື່ອຄົບກຳນົດແລ້ວ ພະເຈົ້າກໍຊົງໃຊ້ພະບຸດຂອງພະອົງມາ..."*

*ທ່ານເຫັນທີ່ພະເຈົ້າຈັດຕັ້ງສະຖານະການທົ່ວໄປໃຫ້ເໝາະສົມເພື່ອການແຜ່ຂ່າວປະເສີດໃນເວລານັ້ນບໍ່? (ໃຫ້ປຶກສາຫາລືໃນການນັ້ນ) ໃຫ້ອ່ານຂໍ້ພະຄຳເຫລົ່ານີ້:*

| | |
|---|---|
| *ມລກ 1:15* | *ຕີໂຕ 1:3* |
| *1 ຕມທ 2:6* | *ເຮັບເລີ 9:26* |

*ໃນປະຈຸບັນນີ້ ພະເຈົ້າຈັດໃຫ້ທ່ານຢູ່ໃສ? ເພື່ອເທດຜົນອັນໃດ? ມີເປົ້າໝາຍປາຍຢ່າງໃດ? ມີຂໍ້ສະດວກປະການໃດທີ່ພະເຈົ້າຈະໃຊ້ເປັນປະໂຫຍດໃນຊີວິດຂອງທ່ານ ເພື່ອໃຫ້ທ່ານປະກາດຂາວປະ ພະທຳ? (ໃຫ້ຮ່ວມກັນຮັບພິຈາລະນາ)*

ຄຳຕອບ:

**1** *ກະລາວດີໂອ (ກລາວດີໂອ)*

**2** *ໂລມ*

**3** *ກຸງໂລມ*

**4** *ກ. ຕາໂຊ ຂ. ອັນຕີໂອເຊຍ ຄ. ເຢລູຊາເລັມ ງ. ກຸງໂລມ*
*ຈ. ທະເລເມດິແຕຣາເນ*

**5** *ກ. ທະເລເມດິແຕຣາເນ ຂ. ກຸງໂລມ*

**6** *ກ. ກີລີເກຍ ຂ. ຄາລາເຕຍ ຄ. ທະເລເມດິແຕຣາເນ*

**7** *ຈັກກະພັດໂລມ*

**8** *ກ. ຖະໜົນປູດ້ວຍຫີນ ເຮືອ ຂ. ທະຫານໂລມ ຄ. ໂຊໂລ*

**9** *ຄ ຖືກ*

**10** *ພາສາກຼີກ*

**11** *ກຼີກ*

**12** *ກຼີກ*

**13** *ກ. ໂຮງທຳ ຂ. ຕາໂຊ ຄ. ກີລີເກຍ*

**14** *ກ. ຄາລາເຕຍ ຂ. ໂຮງທຳ*

**15** *ພະຄຳພີເດີມ*

**16** *ກ. ຢິວ ຂ. ໂຮງທຳມະເທດສະໜາ*

**17** *ຂ ຄ ງ ສ ຖືກ*

**18** *ຂ ງ ຈ ຖືກ*

**19** *ກ. ກຼີກ ຂ. ຢິວ ຄ. ຈັກກະພັດໂລມ*

**20** *ກ. ກຸງໂລມ ຂ. ທະເລເມດິແຕຣາເນ ຄ. ຕາໂຊ ງ. ອັນຕີໂອເຊຍ*
*ຈ. ເຢລູຊາເລັມ*

**21** *ທາງ... ເມດິແຕຣາເນ... ເຮືອ... ທະຫານ*

**22** *ກຼີກ... ຊາດ*

**23** *ໂຮງທຳມະ.... ພະຄຳພີ... ຊ່ວຍ... ຄາລາເຕຍ*

**24** *ການປົກຄອງຈັກກະພັດໂລມ ພາສາກຼີກ ໂຮງທຳມະເທດສະໜາ*

## ການປະຊຸມບົດທີ 6

# ລູກທີ່ຮັບມໍລະດົກ

(ຄລຕ 3:29-4:7)

**1** ໃນເທື່ອກ່ອນ ເຮົາໄດ້ຮຽນຮູ້ແລ້ວວ່າ ເມື່ອໂຊໂລກັບໃຈໃໝ່ເພິ່ນເຂົ້າໃຈແຈ້ງວ່າ ຈະຮັບມໍລະດົກຈາກພະເຈົ້າ. ໃນບົດນີ້ ເຮົາຈະຮຽນກ່ຽວກັບມໍລະດົກຂອງພະເຈົ້າ.

- *ໃຫ້ທ່ານເອົາສໍຂີດກ້ອງຄຳວ່າ "ມໍລະດົກ" ແລະຄຳວ່າ ''ໄດ້ຖານະເປັນບຸດ'' ໃນພະຄຳ ຄລຕ 3:29-4:7.*

ກ. ຄຳວ່າ "ມໍລະດົກ" ເຫັນໃນບົດໃດແລະຂໍ້ໃດ? ______________________________

ຂ. ຄຳວ່າ "ໄດ້ຖານະເປັນບຸດ" ເຫັນໃນບົດໃດແລະຂໍ້ໃດ? ________________________

**2** ມີຄຳສອນເລື່ອງມໍລະດົກທີ່ເຮົາຈະຮັບຈາກພະເຈົ້າຕັ້ງແຕ່ສະໄໝພະຄຳພີເດີມ. ບາດກ້າວໃນການຮັບມໍລະດົກຈາກພະເຈົ້າ ມີ 4 ປະການຄື:

ໜຶ່ງ ຄຳສັນຍາເລື່ອງມໍລະດົກ

ສອງ ການລໍຖ້າເຖິງເວລາຈະຮັບ

ສາມ ຄົບກຳນົດ

ສີ່ ການຮັບເອົາຢ່າງແທ້ຈິງ.

ທັງ 4 ບາດກ້າວປາກົດເຫັນໃນ ຄລຕ 3:29-4:7 ນັ້ນ.

ກ. ຂໍ້ໃດອ້າງເຖິງຄຳສັນຍາທີ່ອັບລາຮາມຮັບ? ________________________________

ຂ. ຂໍ້ໃດແດ່ອ້າງເຖິງຜູ້ທີ່ມີສິດຮັບມໍລະດົກ ແຕ່ຍັງລໍຖ້າຈົນຄົບກຳນົດທີ່ຈະຮັບໄດ້? __________________________________

ຄ. ຂໍ້ໃດອ້າງເຖິງເມື່ອຄົບກຳນົດຈຶ່ງຈະຮັບມໍລະດົກໄດ້ (ປຽບກັບເວລາພະເຢຊູມາ)? ________________________________________

ງ. ຂໍ້ໃດແດ່ບັນລະຍາຍເລື່ອງສະພາບການເປັນຢູ່ຂອງຄົນທີ່ມີສິດເຕັມທີ່ ຈະໄດ້ຮັບມໍລະດົກ? _____________________________________________

*ມີວິທີທາງສອງຢ່າງທີ່ເຮົາຮັບມໍລະດົກໄດ້.*

*ໃຫ້ທ່ານເບິ່ງຮູບກາຕູນຕໍ່ໄປນີ້:*






**3** ເຮົາຈະຮັບມໍລະດົກມີສອງວິທີທາງ.

ກ. ໃຫ້ອ່ານ ຄລຕ 4:1-4 ຕອນພະຄຳພີນັ້ນ ກ່າວເຖິງຄົນຢິວໃນສະໄໝພະຄຳພີເດີມ ທີ່ລໍຖ້າຫຼາຍປີວ່າຈະຮັບມໍລະດົກ ຄືພະຜູ້ຊ່ວຍຈະມາ ແລ້ວຜົນສຸດທ້າຍສຳເລັດໃນການສະເດັດມາຂອງ ພະເຢຊູ. ພະຄຳພີຕອນນີ້ປຽບກັບ ຮູບກາຕູນເທິງ ຫຼືລຸ່ມ? ___________ (ໜ້າກ່ອນ)

ຂ. ໃຫ້ອ່ານ ຄລຕ 4:5-7 ທີ່ກ່າວເລື່ອງຄົນຊາດໃດກໍຕາມ ຫຼັງຈາກພະເຢຊູມາ ທີ່ຢູ່ຢ່າງເດັກທີ່ບໍ່ມີ ບ້ານເຮືອນ ຈົນກວ່າວັນໜຶ່ງເຂົາເພິ່ງອາໄສພະເຢຊູ ແລ້ວພະເຢຊູຮັບເຂົາໄວ້ໃນຖານະເປັນລູກ ຂອງພະອົງ. ຄລຕ 4:5-7 ນັ້ນ ປຽບກັບຮູບກາຕູນໃດ? __________________

**4** ໃນ ຄລຕ 4:1-3 ທີ່ຄົນຢິວລໍຖ້າພະອົງຈະມາຕາມຄຳສັນຍາຕໍ່ອັບລາຮາມ ເຂົາບໍ່ໄດ້ຮັບຕາມຄຳສັນຍາເທື່ອ.

ກ. ໃນເມື່ອຜູ້ທີ່ຈະຮັບມໍລະດົກນັ້ນ ຍັງຢູ່ໃຕ້ພະບັນຍັດຂອງໂມເຊ ເຂົາຢູ່ຢ່າງເປັນລູກທີ່ມີສິດເຕັມ ສ່ວນ ຫຼືຢູ່ໃຕ້ການປົກຄອງຂອງຜູ້ດູແລ? ________________________________

ຂ. ໃນ ຄລຕ 4:2 ຜູ້ປົກຄອງນັ້ນດູແລຫຍັງ? ____________________________________

ຄ. ດູແລຈົນເຖິງເມື່ອໃດ? ________________________________________________

ງ. ການກຳນົດນັ້ນ ປະກົດໃນການສະເດັດມາຂອງໃຜ? _________________________

**5** ການຮັບມໍລະດົກກໍເປັນອັນດຽວກັນກັບການສະເດັດມາຂອງພະເຢຊູ. ຜູ້ ທີ່ເປັນເດັກນ້ອຍລໍຖ້າຮັບມໍລະດົກປຽບກັບຄົນຢິວທີ່ຢູ່ໃຕ້ພະບັນຍັດ ລໍຖ້າພະຜູ້ຊ່ວຍທີ່ຈະມາຕາມທີ່ພະ ເຈົ້າສັນຍາໃຫ້ອັບລາຮາມ. ພະເຢຊູມາໃນເວລາທີ່ດີທີ່ສຸດ ຕາມທີ່ພະສັນຍາກຳນົດໄວ້. ມີຂໍ້ອື່ນໃນພະຄຳພີທີ່ກ່າວເລື່ອງດຽວກັນ.

ກ. ມາລະໂກ 1:15 ຄວາມໃດອ້າງເຖິງເວລານັ້ນ? ______________________________

ຂ. 1 ຕມທ 2:6 ຄວາມໃດ? ______________________________________________

ຄ. ຕີໂຕ 1:3 ຄວາມໃດ? _______________________________________________

**6** ທວນຄືນກ່ອນ!

ໃນເວລາເໝາະສົມທີ່ພະເຈົ້າກຳນົດໄວ້ນັ້ນ ເຫັນວ່າມີຂໍ້ສະດວກ ສາມປະການທີ່ເຮົາຮຽນມາແລ້ວ. ໃຫ້ທ່ານຈົດເທື່ອລະປະການ ແລ້ວອະທິບາຍຂໍ້ສະດວກໃນແຕ່ລະປະການ

ກ. ________________________________________________________________

________________________________________________________________

________________________________________________________________

________________________________________________________________

ຂ. ________________________________________________________________

________________________________________________________________

________________________________________________________________

________________________________________________________________

ຄ. ______________________________________________

______________________________________________

______________________________________________

______________________________________________

**7** ສ່ວນທ່ານຜູ້ຮຽນ ພະເຈົ້າໄດ້ຈັດໃຫ້ທ່ານຢູ່ໃນບ່ອນທີ່ທ່ານຢູ່ ແລະຢູ່ໃນຍຸກນີ້ອີກດ້ວຍ ແລ້ວພະອົງມີ ຈຸດປະສົງໃນການນັ້ນອີກ. ທ່ານສັງເກດຈຸດປະສົງທີ່ພະອົງຈັດໄວ້ໃຫ້ບໍ່? (ບໍ່ຕ້ອງຂຽນຄຳຕອບ).
ໃຫ້ອ່ານຂໍ້ຄວາມຂອງພະເຢຊູກ່ອນຈະຖືກແຂວນໄວ້ທີ່ໄມ້ກາງແຂນໃນ ໂຢຮັນ 12:27-28 ຄວາມທີ່ພະເຢຊູເວົ້ານັ້ນຈະເປັນຕົວຢ່າງຕໍ່ທ່ານເອງຢ່າງໃດ? ____________________

______________________________________________

______________________________________________

______________________________________________

______________________________________________

**8** ໃນ ຄລຕ 4:1-3 ເຮົາຮຽນຮູ້ສະພາບຂອງຊາວຢິວທີ່ລໍຖ້າວ່າພະຜູ້ຊ່ວຍຈະມາ. ຕໍ່ໄປນີ້ເຮົາຈະຍົກ ຕົວຢ່າງ ຈາກ ຄລຕ 4:5-7 ທີ່ກ່າວເລື່ອງສະພາບຜູ້ທີ່ຈະຮັບມໍລະດົກຫຼັງຈາກການສະເດັດມາຂອງ ພະອົງ ຄືພວກເຮົາໃນສະໃໝນີ້.

*ມີນັກສາດສະໜາສາດຜູ້ໜຶ່ງ ທີ່ກ່າວວ່າ:*

*ແຕ່ກ່ອນເຮົາເປັນນັກພະເນຈອນ ແຕ່ພະເຈົ້າເລືອກເຮົາໄວ້ເປັນບຸດຂອງພະເຈົ້າທີ່ຢູ່ໃນລາດຊະວັງ ຂອງພະອົງ. ເຮົາເຄີຍເຮັດບາບຕໍ່ສູ້ພະອົງ ເຄີຍເສຍນິໄສ ເຄີຍທ້າທາຍພະອົງ ເຄີຍຫຍາບຊ້າ ພະອົງເຈົ້າຊົງໂທດບາບເຮົາແລ້ວ ເຮົາຮັບຮູ້ວ່າຄວາມຮັກຂອງພະເຈົ້າເປັນສິ່ງທີ່ປຽບບໍ່ໄດ້.*

ເຫັນວ່າທີ່ມະນຸດເຮົາກາຍເປັນລູກຂອງພະເຈົ້າ ກໍມີຢູ່ສອງຢ່າງຄື:

(1) ໂດຍການກຳເນີດ ແລະ (2) ໂດຍການຮັບເດັກກຳພ້າໃຫ້ໄດ້ຖານະເປັນບຸດ.

ກ. ນັກສາສະໜາສາດນັ້ນກ່າວເຖິງຄົນທີ່ຈະຮັບມໍລະດົກ ໂດຍການກຳເນີດ ຫຼືໂດຍທີ່ເດັກກຳພ້າໄດ້ ຖານະເປັນລູກ? ____________________

ຂ. ໃນ ຄລຕ 4:5-7 ນັ້ນ ແມ່ນສະເພາະຂໍ້ໃດທີ່ກ່າວເຖິງການນັ້ນ? ____________________

ຄ. ເຮົາຄວນຂອບໃຈນຳໃຜ ເພາະຄວາມຮັກອັນຍິ່ງໃຫຍ່ນັ້ນ? ____________________

**9** ຖ້າພໍ່ແມ່ທີ່ບໍ່ມີລູກ ຈະເອົາເດັກກຳພ້າມາໃຫ້ໄດ້ຖານະເປັນລູກ ເດັກນັ້ນຈະເປັນຜູ້ຮັບມໍລະດົກ. ເຊັ່ນດຽວກັນ ພະເຈົ້າຈະຮັບເອົາພວກເຮົາທີ່ເປັນຄົນບາບມາໃຫ້ໄດ້ຖານະວ່າເປັນລູກ ເພື່ອ ວ່າພວກເຮົາຈະມີສິດຮັບມໍລະດົກທີ່ພະເຈົ້າປະທານໃຫ້.
ກ. ແມ່ນ 3 ຂໍ້ໃດໃນ ຄລຕ ບົດທີ 4 ທີ່ສອນຢ່າງນັ້ນ? ____________________

ຂ. ຈຸດປະສົງທີ່ພະເຈົ້າເອົາພວກເຮົາໃຫ້ໄດ້ຖານະເປັນລູກກໍເພື່ອໃຫ້ເຮົາມີສິດຮັບຂອງ ປະເສີດໃດ? ______________________________

**10** ຫຼາຍປີກ່ອນໃນປະເທດເກົາຫຼີ ມີຄົນທີ່ຖິ້ມເດັກເກີດໃໝ່ໄວ້ກັບຂີ້ເຫຍື່ອ. ມີຄອບຄົວຄຼິດສະຕຽນທີ່ເອົາ ໄປລ້ຽງແລ້ວຖືວ່າເປັນລູກຂອງເຂົາເອງ. ດັ່ງນັ້ນເດັກຈຶ່ງບໍ່ຕາຍໄດ້ມີຄວາມປອດໄພຈາກຄອບຄົວນັ້ນ

ກ. ເດັກນັ້ນໄດ້ລອດຈາກຫຍັງ? ______________________________

ຂ. ໄດ້ຮັບຫຍັງຈາກຄອບຄົວຄຼິດສະຕຽນ? ______________________________

ຄ. ເດັກນັ້ນປຽບທຽບຫຍັງ? ______________________________

ງ. ພວກເຮົາໄດ້ລອດຈາກໃຜ? ______________________________

**11** ໃຫ້ອ່ານໂຢຮັນ 14:1-3

ກ. ຂໍ້ໃດທີ່ພະເຢຊູບອກວ່າ ຈະໄປກ່ອນເຮົາ? ______________________________

ຂ. ຂໍ້ໃດທີ່ບອກວ່າພະອົງຈັດແຈງບ່ອນໄວ້ສຳລັບເຮົາ? ______________________________

ຄ. ຈະມີທີ່ຢູ່ຫຼາຍບ່ອນ ໃນຂໍ້ໃດ? ______________________________

ງ. ພະອົງຈະກັບມາຮັບເຮົາໄປກັບພະອົງ? ______________________________

ຈ. ພະເຢຊູຢູ່ບ່ອນໃດພວກເຮົາຈະຢູ່ທີ່ນັ້ນເໝືອນກັນ? ______________________________

ສ. ເຮົາຈຶ່ງໄວ້ວາງໃຈໃນພະອົງ? ______________________________

*ໃຫ້ອ່ານ ໂລມ 8:15-19*

- *ໃນເມື່ອເຮົາໄປເຖິງຟ້າສະຫວັນເຫັນລັດສະໝີຂອງພະອົງ ເຮົາຈະເຫັນສິ່ງທີ່ຕາຂອງມະນຸດ ບໍ່ເຫັນກ່ອນຈັກເທື່ອ. ໃຫ້ພວກທ່ານແລກປ່ຽນຄວາມຄິດເຫັນເລື່ອງເມືອງຟ້າສະຫວັນ.*
- *ຕໍ່ໄປໃຫ້ອ້ອນວອນຕໍ່ພະເຈົ້າ ສັນລະເສີນພະເຈົ້າ ຄາດໝາຍວັນທີ່ຈະເຫັນພະອົງໜ້າຕໍ່ໜ້າ*

*ຕັ້ງແຕ່ອາທິດທີ່ຈະມາເຖິງນີ້ ເຮົາຈະຮຽນເລື່ອງພາກທີ່ໂຊໂລໄປຈາກບ້ານພັກຢູ່ທີ່ເມືອງອັນຕີໂອຂຍ ແລ້ວເລີ້ມອອກໄປປະກາດພະທຳ. ໃຫ້ເອົາສໍສີຟ້າ ສີແດງ ແລະສີເຫຼືອງມາປະຊຸມອາທິດໜ້າ.*

ຄໍາຕອບ:

**1** *ກ. 3:29 4:1 ແລະ 4:7 ຂ. 4:5*

**2** *ກ. 3:29 ຂ. 4:1-3 ຄ. 4:4 ງ. 4:5-7*

**3** *ກ. ຮູບລຸ່ມ ຂ. ຮູບເທິງ*

**4** *ກ. ຢູ່ໃຕ້ການປົກຄອງ ຂ. ຊັບ (ມໍລະດົກ) ຄ. ເວລາທີ່ບິດາກໍານົດໄວ້ ງ. ຂອງພະເຢຊູ*

**5** *ກ. ເວລາກໍານົດມາເຖິງແລ້ວ ຂ. ເວລາອັນເໝາະສົມ ຄ. ເວລາທີ່ພະອົງໄດ້ຊົງກໍານົດໄວ້*

**6** *ກ. ການປົກຄອງຈັກກະພັດໂລມ - ມີຖະໜົນດີລະຫວ່າງເມືອງສໍາຄັນ. ມີເຮືອເພື່ອໄປມາຢ່າງ ສະດວກ ໃນເມື່ອຈະປະກາດພະທໍາ ທະຫານໂລມຮັກສາສັນຕິພາບ. (ຄໍາຄ້າຍຄືກັນກໍໄດ້) ຂ. ພາສາກຼີກ - ໃນຈັກກະພັດໂລມ ມີຫຼາຍແຂວງ ແລະ ຫຼາຍພາສາ ແຕ່ພາສາກຼີກເປັນພາສາ ກາງທີ່ເຂົາເຂົ້າໃຈໃນທຸກບ່ອນ. ຖ້າພວກສາວົກຈະປະກາດພະທໍາເປັນພາສາກຼີກ ຄົນສ່ວນ ຫຼາຍເຂົ້າໃຈໄດ້. (ຄໍາຄ້າຍຄືກໍໄດ້) ຄ. ໂຮງທໍາມະເທສະໜາຢິວ - ໃນທຸກເມືອງທີ່ມີຄົນຢິວຫຼາຍ ມີໂຮງທໍາທີ່ເຂົາໄປສຶກສາພະຄໍາ ພີເດີມ. ດັ່ງນັ້ນ ຄົນຢິວຮູ້ເລື່ອງຄໍາທໍານວາຍເລື່ອງພະຜູ້ຊ່ວຍທີ່ຈະມາ ແລະເຂົາໃຊ້ເປັນທີ່ ປະກາດພະທໍາໄດ້. (ຄໍາຄ້າຍຄືກໍໄດ້)*

**7** *(ບໍ່ມີຄໍາຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່)*

**8** *ກ. ທີ່ເດັກກໍາພ້າໄດ້ຖານະເປັນລູກ ຂ. ຂໍ້ 5 ຄ. ພະເຈົ້າ (ພະເຢຊູ)*

**9** *ກ. 5, 6, 7 ຂ. ມໍລະດົກ*

**10** *ກ. ຈາກສະພາບທີ່ຈະຕາຍ (ຄໍາຄ້າຍຄືກັນກໍໄດ້) ຂ. ໄດ້ຮັບຄວາມປອດໄພ ຄ. ປຽບທຽບກັບຄົນບາບເຮົາ ງ. ຈາກພະເຢຊູ*

**11** *ກ. ຂໍ້ 2 ຂ. ຂໍ້ 2 ແລະ 3 ຄ. ຂໍ້ 2 ງ. ຂໍ້ 3 ຈ. ຂໍ້ 3 ສ. ຂໍ້ 1*